# ທູລາເຣິເມຍ (Tularemia)

ທູລາເຣິເມຍແມ່ນພະຍາດທີ່ຮ້າຍແຮງຫລາຍ. ພະຍາດທູລາເຣິເມຍເກີດຈາກແບັກແທເລຍທີ່ບາງຄັ້ງພົບໃນໜູ, ກະຕ່າຍ ແລະສັດປ່າຊະນິດອື່ນໆ.

## ຂ້າພະເຈົ້າສາມາດຕິດພະຍາດທູລາເຣິເມຍໄດ້ແນວໃດ?

ທ່ານອາດຈະຕິດເຊື້ອພະຍາດທູລາເຣິເມຍ ຖ້າຫາກວ່າທ່ານ:

- ຈັບບາຍຊາກສົບຂອງສັດທີ່ຕິດເຊື້ອພະຍາດ,
- ທ່ານຖືກໂຕເຫັບ, ໂຕເຫລືອກ ຫລືແມງໄມ້ປະເພດອື່ນກັດ,
- ກິນອາຫານ ຫລືດື່ມນ້ຳທີ່ຕິດເຊື້ອພະຍາດ, ຫລື
- ຫາຍໃຈເອົາແບັກແທເລຍທີ່ເຮັດໃຫ້ເກີດພະຍາດທູລາເຣິເມຍ.

## ພະຍາດທູລາເຣິເມຍເປັນອັນຕະລາຍບໍ?



ອັນຕະລາຍ. ທ່ານຕ້ອງໄດ້ຮັບການປິ່ນປົວ ***ທັນທີ*** ດ້ວຍຢາຕ້ານເຊື້ອຊະນິດພິເສດ, ຖ້າບໍ່ດັ່ງນັ້ນອາດຈະເຖິງແກ່ຊີວິດ. ທ່ານຄົງຈະລອດຊີວິດ, ຖ້າຫາກວ່າປິ່ນປົວດ້ວຍຢາຕ້ານເຊື້ອດັ່ງກ່າວ.

## ອາການຂອງພະຍາດທູລາເຣິເມຍເປັນແນວ?

ຕາມປົກກະຕິແລ້ວອາການຂັ້ນທຳອິດເກີດຂຶ້ນພາຍໃນ 3–5 ວັນ:

- ໄຂ້ກະທັນຫັນ, ຈັບສັ່ນ,
- ຕ່ອມໃຄ່ຂຶ້ນ,ແລະເຈັບ,
- ເຈັບຫົວ,
- ຖອກທ້ອງ,
- ເຈັບກ້າມເນື້ອແລະຂໍ້ຕໍ່,
- ໄອແຫ້ງ,
- ອ່ອນເພຍ.

ອາການອື່ນໆ ຈະຂຶ້ນກັບວິທີທີ່ທ່ານໄດ້ຕິດພະຍາດນີ້. ທ່ານອາດຈະມີບາດແຜນ້ອຍໆ ຢູ່ຕາມຜິວໜັງ ຫລືປາກ, ເຈັບຄໍ, ຕາໃຄ່ຂຶ້ນ ແລະເຈັບຕ່ອມຢູ່ຄໍ, ທ້ອງຂີ້ແຮ້ ຫລືມຸມກົກຂາໃຄ່ຂຶ້ນແລະເຈັບ.

ຕໍ່ມາທ່ານອາດຈະເປັນປອດບວມແລະຫາຍໃຈຫອບ, ເຈັບໜ້າເອິກ, ໄອມີຂີ້ກະເທີ່ທີ່ປົນເລືອດ. ບາງຄົນອາດເຊົາຫາຍໃຈ ແລະເຖິງແກ່ ຊີວິດ.

## ພະຍາດທູລາເຣິເມຍເປັນພະຍາດທີ່ຕິດຕໍ່ບໍ?

ບໍ່. ທ່ານບໍ່ສາມາດຕິດພະຍາດທູລາເຣິເມຍຈາກຜູ້ທີ່ເປັນພະຍາດນີ້.

## ມີວັກຊີນປ້ອງກັນບໍ?

ບໍ່ມີ.

## ຈະເຮັດແນວໃດ ຖ້າຂ້າພະເຈົ້າຄິດວ່າ ຂ້າພະເຈົ້າຕິດພະຍາດທູລາເຣິເມຍ?



ໂທຫາທ່ານໝໍປະຈຳຄອບຄົວຂອງທ່ານຫລືໂຮງໝໍໂດຍ***ທັນທີ.***

## ຂ້າພະເຈົ້າສາມາດປ້ອງກັນບໍ່ໃຫ້ຕິດພະຍາດທູລາເຣິເມຍໄດ້ແນວໃດ?

ທ່ານສາມາດ:

- ປ້ອງກັນບໍ່ໃຫ້ແມງໄມ້ກັດ,
  - ໃຊ້ຢາປ້ອງກັນແມງໄມ້ DEET ຢູ່ຜິວໜັງ, ແລະ
  - ສີດເຄື່ອງນຸ່ງດ້ວຍຢາປ້ອງກັນແມງໄມ້ທີ່ມີເຄມີ ເພີເມທຣິນ (permethrin).
- ລ້າງມືດ້ວຍສະບູແລະນ້ຳອຸ່ນເລື້ອຍໆ, ໂດຍສະເພາະຫລັງຈາກໄດ້ຈັບບາຍຊາກສັດ,
- ປຸງແຕ່ງອາຫານໃຫ້ສຸກທຸກຄັ້ງ, ແລະ
- ຕ້ອງແນ່ໃຈວ່ານ້ຳໃຊ້ມາຈາກແຫລ່ງທີ່ປອດໄພ.

ໃຫ້ຕິດຕໍ່ກັບສັດຕະວະແພດ ຖ້າວ່າສັດລ້ຽງຂອງທ່ານ (ໂດຍສະເພາະກະຕ່າຍ, ໜູ, ແລະສັດຈຳພວກກັດແທ້ນ) ເກີດອາການເຊັ່ນ ເປັນໄຂ້, ນ້ຳໜັກຫລຸດລົງ, ລະບົບຕ່ອມໃຄ່ຂຶ້ນ ມີບາດແຜ, ແລະອື່ນໆ.

## ຜູ້ກໍ່ການຮ້າຍສາມາດໃຊ້ແບັກແທເລຍທູລາເຣິເມຍເປັນອາວຸດຊີວະພາບໄດ້ບໍ?

ເປັນໄປໄດ້, ແຕ່ເປັນໄປໄດ້ຍາກທີ່ຈະປ່ອຍແບັກແທເລຍທູລາເຣິເມຍຢ່າງພຽງພໍເຂົ້າໃນອາກາດ.

## ສຳລັບຂໍ້ມູນເພີ່ມເຕີມຂໍໃຫ້ຕິດຕໍ່ ...

ໂທຫາ CDC (Centers for Disease Control)
ສຳລັບຂໍ້ມູນ ທີ່ເປັນພາສາອັງກິດ:
800-CDC-INFO (800-232-4636)
888-232-6348 (TTY)

ຫລືເຂົ້າໄປ: www.bt.cdc.gov/agent/tularemia
www.dhs.ca.gov/epo